# ບົດທີ 18

# ຄວາມໝາຍໃນສິນມະຫາສະນິດ




**1** ກ. ໃນບົດຮຽນທີ່ຜ່ານມາເຮົາຮຽນຮູ້ແລ້ວວ່າ ພະອົງເລີ້ມຕົ້ນສິນມະຫາສະນິດໃນຄືນທໍາອິດຂອງເທດສະການໃດ? ____________________

ຂ. ມີອີກຊື່ໜຶ່ງວ່າຢ່າງໃດ? ____________________

ຄ. ໃນເທດສະການນັ້ນ ພວກຢິວລະນຶກເຖິງເຫດການໃດ? ____________________

ງ. ເປັນການເໝາະສົມທີ່ພະອົງຈະຕາຍຢ່າງລູກແກະບູຊາໃນເທດສະການນັ້ນ ເພາະແມ່ນໂດຍຄວາມຕາຍຂອງພະ ອົງທີ່ເຮົາໄດ້ຮັບການປົດປ່ອຍຈາກຫຍັງ? ____________

**2** ກ. ທີ່ພະເຢຊູບອກວ່າ "ນີ້ແຫຼະຄືກາຍຂອງເຮົາ" ແປວ່າຫຍັງ? (ເລືອກ)

______ ເຂົ້າຈີ່ນັ້ນປຽບທຽບພະກາຍຂອງພະເຢຊູ.

______ ເຂົ້າຈີ່ນັ້ນຈະກາຍເປັນພະກາຍຂອງພະເຢຊູ.

______ ເຂົາຈະປັ້ນເຂົ້າຈີ່ໃຫ້ມີລັກສະນະຮູບແບບຂອງພະເຢຊູ.

ຂ. ທີ່ພະອົງວ່າ "ນີ້ແຫຼະຄືເລືອດຂອງເຮົາ" ແປວ່າຫຍັງ? ____________________

**3** ໃນສິນມະຫາສະນິດພະເຢຊູໃຊ້ຈອກແລະເຂົ້າຈີ່ຢ່າງໃດ? (ເລືອກ)

ກ. ເພື່ອໃຫ້ເຂົາອີ່ມທ້ອງ

ຂ. ເພື່ອສະແດງການອັດສະຈັນ

ຄ. ເພື່ອປຽບທຽບການບູຊາຕົວພະອົງເອງ

**4** ໃນປະເທດປາແລັດສະຕິນສະໄໝຂອງພະເຢຊູນັ້ນເຂົ້າຈີ່ກັບນ້ຳອະງຸ່ນເປັນຂອງກິນແລະດື່ມສາມັນຂອງຄົນທົ່ວໄປ. ເຊັ່ນດຽວກັນກັບຄົນລາວທີ່ກິນເຂົ້າກັບປາເປັນຂອງກິນສາມັນ. ຄົນໃນປະເທດປາແລັດສະຕິນສະໄໝຂອງພະເຢຊູ ເຄີຍກິນຫຍັງ?

______________________________ ແລະ ______________________________

**5** ພະເຢຊູເອົາຂອງກິນຢ່າງໃດເປັນສັນຍາລັກໃນສິນມະຫາສະນິດ? (ເລືອກ)

ກ. ຂອງກິນທຳມະດາ ຂ. ອາຫານທີ່ມີລາຄາແພງ ຄ. ຢາ

*<u>ໝາຍເຫດ</u>: ໃນສະໄໝພະຄຳພີນັ້ນເຂົາບໍ່ທັນມີຕູ້ເຢັນ ທຸກໆ ເທື່ອທີ່ເຂົາເອົານ້ຳອະງຸ່ນໄປໄວ້ຫຼາຍວັນກໍຈະກາຍເປັນເຫຼົ້າ. ຖ້າເຂົາດື່ມແຕ່ນ້ຳອະງຸ່ນໃໝ່ໆ ຍັງບໍ່ທັນເປັນເຫຼົ້າເທື່ອຖ້າວ່າເອົາໄວ້ຊົ່ວໄລຍະໜຶ່ງກໍຈະກາຍເປັນເຫຼົ້າ. ໃນທຸກວັນນີ້ມີບາງຄຶດສະຕະຈັກທີ່ໃຊ້ເຫຼົ້າອະງຸ່ນແລະມີບາງຄຶດສະຕະຈັກທີ່ໃຊ້ຢ່າງອື່ນ.*

**6** ເຫັນວ່າພະເຢຊູເອົາຂອງກິນມາເປັນສັນຍາລັກໃນສິນນີ້, ອາດຈະມີເນື້ອຄວາມວ່າຢ່າງໃດ? (ເລືອກ)

ກ. ພະເຢຊູເປັນໝໍທີ່ເໜືອໝໍທຸກຄົນ. ຂ. ພະເຢຊູຊົງລ້ຽງເຮົາດ້ານວິນຍານ.

ຄ. ພະເຢຊູຊົງຊຳລະເຮົາຈາກຄວາມຕາຍ.

**7** ພະເຢຊູເປັນຜູ້ລ້ຽງຄືພະອົງ __________________ ເຮົາດ້ານວິນຍານ. (ຕື່ມຄວາມທີ່ຂາດ)

**8** ໃຫ້ອ່ານ ໂຢຮັນ 6:35.

ກ. ພະເຢຊູເປັນອາຫານຢ່າງໃດ? ______________________________________

ຂ. ຜູ້ທີ່ມາຫາພະອົງຈະບໍ່ຢາກຫຍັງ? ____________________________________

**9** ຄວາມຂອງພະອົງໃນໂຢຮັນ 6:35 ນັ້ນເປັນຄຳປຽບທຽບ ຂອງກິນທີ່ພະເຢຊູຍົກມາໃຊ້ໃນສິນມະຫາສະ ນິດສະ ແດງວ່າພະເຢຊູຈະຊົງລ້ຽງເຮົາໃນດ້ານໃດ? ____________________

**10** ຜູ້ນຳໃນພິທີສິນມະຫາສະນິດຈະພະຍາຍາມເຮັດຕາມແບບທີ່ພະເຢຊູເຮັດ.

ກ. ໃຫ້ອ່ານ ມທ 26:26 ພະອົງຈັບເຂົ້າຈີ່ມາ ເມື່ອຂໍພະພອນແລ້ວພະອົງເຮັດຫຍັງຕໍ່ໄປ?

____________________________________________________________

ຂ. ເຂົ້າຈີ່ທີ່ຖືກຫັກນັ້ນປຽບທຽບກັບຫຍັງ ໃນຊີວິດຂອງພະເຢຊູ? __________________

**11** ໃຫ້ອ່ານ 1 ໂກລິນໂທ 11:24 ອາຈານໂປໂລສອນເລື່ອງນີ້ອີກວ່າ:

*ແລະເມື່ອຂອບພະຄຸນແລ້ວຊົງຫັກເຂົ້າຈີ່ນັ້ນໂດຍຊົງກ່າວວ່າ "ນີ້ແຫຼະຄືກາຍຂອງເຮົາຊຶ່ງໃຫ້ສຳລັບພວກເຈົ້າຈົ່ງເຮັດຢ່າງ ນີ້ໃຫ້ເປັນທີ່ລະນຶກເຖິງເຮົາ."*

ກ. ການນັ້ນສະແດງເຖິງພະກາຍຂອງໃຜ? __________________________________

ຂ. ພະອົງຕາຍເພື່ອເຮົາບ່ອນໃດ? ______________________________________

**12** ກ. ໃຫ້ອ່ານ ມທ 26:28. ໃນຂໍ້ນີ້ພະເຢຊູອ້າງເຖິງຈອກ (ຄືນ້ຳອະງຸ່ນໃນຈອກເປັນຕົ້ນ) ພະອົງບອກວ່າ: "...ນີ້ແຫຼະຄືເລືອດຂອງເຮົາແມ່ນເລືອດອັນກ່ຽວກັບພະສັນຍາທີ່ __________ ເພື່ອຍົກຜິດບາບຄົນຈຳນວນຫຼາຍ" (ຕື່ມຄວາມທີ່ຂາດ)

ຂ. ເລືອດຂອງພະເຢຊູທີ່ຖອກອອກເພື່ອເຮົາບ່ອນໃດ? __________________________

**13** ເຫື່ອໃດທີ່ຈະເອົານ້ຳອະງຸ່ນນັ້ນໃສ່ໄວ້ໃນຈອກກໍຕ້ອງຖອກອອກຈາກເຕົ້າກ່ອນ. ໃນເວລາຈະຖອກອອກນັ້ນກໍປຽບ ທຽບວ່າເລືອດຂອງພະເຢຊູຖືກຖອກອອກເພື່ອເຮົາ. ທັງເຂົ້າຈີ່ແລະນ້ຳອະງຸ່ນນັ້ນປຽບທຽບເຫດການໃດໃນຊີວິດຂອງ ພະເຢຊູ? __________________________

**14** ກ. ພະເຢຊູເອົາຂອງກິນມາເປັນສັນຍາລັກສະແດງວ່າພະອົງຊົງລ້ຽງເຮົາໃນດ້ານໃດ? _____

ຂ. ຜູ້ແຕ່ງໂຕະສິນມະຫາສະນິດຈະຫັກເຂົ້າຈີ່ແລະຖອກນ້ຳອະງຸ່ນອອກປຽບທຽບເຫດການໃດ? ______________________________



**15** ສິນມະຫາສະ ນິດນັ້ນເປັນພິທີທີ່ທຸກຄົນມີສ່ວນຮ່ວມກັນ.

ກ. ໃນ ມທ 26:26 ພະເຢຊູຫັກເຂົ້າຈີ່ຍື່ນໃຫ້ພວກສາວົກແລ້ວບອກໃຫ້ເຂົາເຮັດຫຍັງ?

______________________________________________________________

ຂ. ໃນ ມທ 26:27 ພະອົງບອກໃຫ້ເຂົາເຮັດຫຍັງກັບຈອກ? ______________________

**16** ຕາມໃນ ມທ 26:27 ຜູ້ດຽວມີສິດດື່ມແຕ່ຈອກ ຫຼືແມ່ນຄຣິດສະຕຽນທຸກຄົນ? ___________

**17** ເຂົ້າຈີ່ປຽບທຽບກັບພະກາຍຂອງພະເຢຊູທີ່ຖະຫວາຍເປັນເຄື່ອງບູຊາບ່ອນໄມ້ກາງແຂນ. ນ້ຳອະງຸ່ນປຽບທຽບກັບ ເລືອດຂອງພະອົງທີ່ຖືກຖອກອອກເພື່ອເຮົາບ່ອນໄມ້ກາງແຂນ. ທີ່ເຮົາຮັບກິນເຂົ້າຈີ່ແລະຮັບດື່ມແຕ່ຈອກສະແດງວ່າເຮົາ ຮັບໃຜເປັນພະຜູ້ຊ່ວຍເຮົາໃຫ້ໄດ້ລອດ? _______

**18** ຜູ້ທີ່ຮັບກິນໂດຍບໍ່ເຊື່ອກໍອາດຈະມີຢ ແຕ່ສ່ວນຄົນທີ່ໄວ້ວາງໃຈໃນພະເຢຊູມີຄວາມໝາຍວ່າທີ່ເຮົາຮັບກິນເຂົ້າຈີ່ແລະ ຈອກປຽບທຽບກັບເຮົາຈະຮັບຫຍັງ? ______________________

_______________________________________________________________

**19** ກ. ທີ່ພະເຢຊູໃຊ້ຂອງກິນໃນສິນມະຫາສະນິດສະແດງວ່າພະອົງຊົງລ້ຽງເຮົາໃນດ້ານໃດ?

______________________________________________________________

ຂ. ຜູ້ແຕ່ງໂຕະຮັບສິນມະຫາສະນິດຫັກເຂົ້າຈີ່ແລະຖອກນ້ຳອະງຸ່ນອອກປຽບທຽບຫຍັງ?

______________________________________________________________

ຄ. ທີ່ພວກຄຣິດສະຕຽນຮັບກິນເຂົ້າຈີ່ແລະຮັບດື່ມນ້ຳນັ້ນໝາຍຄວາມວ່າຂົາຮັບໃຜເປັນພະຜູ້ຊ່ວຍໃຫ້ໄດ້ລອດ? ______________________________________________

**20** ພວກເຮົາກິນເຂົ້າທຸກໆມື້ເພື່ອບຳລຸງຊີວິດກໍແມ່ນຢູ່ ແຕ່ບໍ່ພຽງກັບການນັ້ນຢ່າງດຽວທີ່ເຮົານັ່ງໂຕະກັບພີ່ນ້ອງຍັງມີສ່ວນດີ ຢ່າງໃດອີກ? (ເລືອກ)

ກ. ເພື່ອຮ່ວມສາມັກຄີກັບພີ່ນ້ອງທີ່ມີຄວາມຮັກແພງຊຶ່ງກັນແລະກັນ.

ຂ. ເພື່ອເຮົາຈະໄດ້ກິນກ່ອນໝູ່ ຄ. ເພື່ອເຮົາບໍ່ຕ້ອງຊື້ເອົາຢູ່ຕະຫຼາດ

**21** ເຂົ້າຈີ່ດຽວກັນທຸກເທື່ອທີ່ພວກຄຣິດສະຕຽນຮ່ວມຮັບສິນມະຫາສະນິດດ້ວຍກັນການນັ້ນສະແດງ ຄວາມຮັກແລະຄວາມສາ ມັກຄີກັນລະຫວ່າງພີ່ນ້ອງຄຣິດສະຕຽນ. ການຮ່ວມໂຕະຮັບສິນມະຫາ ສະນິດສະແດງໃຫ້ເຫັນຫຍັງ? (ເລືອກ)

ກ. ເຫັນວ່າຜູ້ໃດຕ້ອງອາໄສແຕ່ຕົນເອງ ຂ. ເຫັນວ່າເຮົາບໍ່ຕ້ອງຫ່ວງກັບຜູ້ອື່ນ

ຄ. ເຫັນວ່າເຮົາເປັນອັນໜຶ່ງອັນດຽວກັນໃນຄອບຄົວຂອງພະເຈົ້າ.

**22** ໃຫ້ອ່ານ 1 ໂກລິນໂທ 10:17

ກ. ເຂົ້າຈີ່ມີຈັກກ້ອນ? ____________________

ຂ. ພວກຄຣິດສະຕຽນເຮົາມີຈັກຄົນ? ____________________

ຄ. ພວກເຮົາຈຶ່ງເປັນຮ່າງກາຍຢ່າງໃດ? ____________________

**23** ເມື່ອເຮົາຮ່ວມຮັບສິນມະຫາສະນິດເປັນຕົວຢ່າງທີ່ແຈ້ງວ່າ ພວກຄຣິດສະຕຽນຮ່ວມກັນເປັນຄອບ ຄົວດຽວຄືຄອບຄົວໃຜ? ____________________

**24** ກ. ທີ່ໃຊ້ການກິນໃນພິທີສິນມະຫາສະນິດປຽບທຽບຫຍັງ?

____________________

ຂ. ທີ່ຜູ້ແຕ່ງຈະຫັກເຂົ້າຈີ່ແລະຖອກນ້ຳອະງຸ່ນອອກ ປຽບທຽບເຖິງເຫດການໃດ?

____________________

ຄ. ຜູ້ທີ່ເຂົ້າຮ່ວມຮັບເຂົ້າຈີ່ແລະຮັບຈອກສະແດງວ່າເຂົາຮັບຫຍັງກ່ອນ?

____________________

ງ. ທີ່ຮັບປະທານຮ່ວມກັນສະແດງຫຍັງ?

____________________

**25** ຖ້າຄຣິດສະຕຽນທຸກຄົນເຂົ້າຮ່ວມໃນຄອບຄົວຂອງພະເຈົ້າ ດັ່ງນັ້ນຄຣິດສະຕຽນທຸກຄົນຄວນຈະ ເຂົ້າຮ່ວມກັນຮັບສິນມະຫາ ສະນິດດ້ວຍ. ແຕ່ວ່າບາງເທື່ອມີຄົນທີ່ຂາດບໍ່ມາເພາະເຂົາບໍ່ເຂົ້າໃຈ ເງື່ອນໄຂ.ໃຫ້ອ່ານ 1 ໂກລິນໂທ 11:27-32

ກ. ໃນຂໍ້ 28 ນັ້ນທຸກຄົນຈຶ່ງພິຈາລະນາເບິ່ງຫຍັງກ່ອນ? ____________________

ຂ. ຖ້າພິຈາລະນາເບິ່ງໃຈຂອງຕົນເອງຢ່າງຖືກຕ້ອງເຮົາຈະບໍ່ຖືກຫຍັງ? ____________________

**26** ຖ້າເຮົາຈະເຮັດຕາມຄຳສອນເຫຼົ່ານີ້ຢ່າງຖືກຕ້ອງເຮົາຄວນຮັບຮູ້ຜິດບາບຂອງຕົນ. ຖ້າເຫັນວ່າ ໃຈຂອງເຮົາຍັງຕິດກັບບາບ ນັ້ນເຮົາຈຶ່ງຖິ້ມຫຍັງແລະເອົາຫຍັງກ່ອນຈະຮັບສິນມະຫາສະ ນິດ?

____________________

**27** ດັ່ງນັ້ນ ເງື່ອນໄຂທຳອິດກ່ອນທີ່ເຮົາຈະຮັບສິນມະຫາສະນິດຄືຫຍັງ? ____________________

**28** ໃນຫຼັກສູດນັດທາຍເຫຼັ້ມທີ 2 ບົດທີ 3 ເຮົາໄດ້ຮຽນເລື່ອງຄຳເທດສະໜາຂອງໂຢຮັນບັບຕິສະ ໂຕ. ໂຢຮັນນັ້ນເທດສະໜາວ່າຈົ່ງເຮັດຫຍັງ? ____________________

**29** ກ. ໃນເຮັບເລີ 11:6 ເຫັນເງື່ອນໄຂປະການທີສອງກ່ອນຈະຮັບສິນມະຫາສະນິດ. ປະການທີໜຶ່ງຄືຈົ່ງຖິ້ມໃຈເກົ່າເອົາໃຈ ໃໝ່ກ່ອນປະການທີສອງຕ້ອງມີຫຍັງອີກ? ____________

ຂ. ເງື່ອນໄຂເພື່ອຈະໄດ້ຮັບຄວາມລອດສອງປະການນັ້ນເປັນອັນດຽວກັນກັບເງື່ອນໄຂກ່ອນຈະຮັບສິນມະຫາສະ ນິດຄື: ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລະຈົ່ງມີຄວາມເຊື່ອໃນພະອົງ. ແນ່ນອນແລ້ວວ່າ! ທີ່ເຮົາໄດ້ຮັບກິນເຂົ້າຈີ່ ແລະຮັບດື່ມນ້ຳອະງຸ່ນໝາຍຄວາມວ່າເຮົາຮັບໃຜເປັນພະຜູ້ຊ່ວຍ? ______________________________________________

**30** ເງື່ອນໄຂສອງປະການກ່ອນເຮົາຈະຮັບສິນມະຫາສະນິດຄືຫຍັງ?

________________________________________________________________

________________________________________________________________

**31** ມີຄຼິດສະຕຽນບາງຄົນທີ່ບໍ່ເຂົ້າໃຈເລື່ອງພະຄຸນຂອງພະອົງເທື່ອ. (ຄືພະອົງຊົງມີຄວາມຮັກຕໍ່ພວກເຮົາໃນເມື່ອເຮົາຍັງບໍ່ ຮັກພະອົງເທື່ອ) ຜູ້ທີ່ບໍ່ເຂົ້າໃຈດີນັ້ນຖືວ່າຈຳເປັນຕ້ອງເຮັດບຸນກ່ອນເພື່ອສົມຄວນຮັບສິນມະຫາສະ ນິດ. ເຂົາສຳນຶກຕົວ ວ່າເຮັດບາບມາແລ້ວຈຶ່ງບໍ່ສົມຄວນຮັບສິນ. ໃຫ້ທ່ານເບິ່ງຮູບພາບຂ້າງຂວານີ້:

ກ. ໜ້າເປື້ອນປານນັ້ນນາງຄວນ ຈະໄປທ່ຽວບໍ່?

______________________________

ຂ. ຈຳເປັນຕ້ອງຢູ່ໃນເຮືອນບໍ່?

______________________________

ຄ. ຖ້າວ່າໜ້າເປື້ອນຄວນເຮັດຢ່າງໃດ?

______________________________

ງ. ລ້າງໜ້າແລ້ວຈະໄປຢ້ຽມຢາມໝູ່ໄດ້ບໍ່?

______________________________




**32** ເຊັ່ນດຽວກັນ ໃນເລື່ອງການຮັບສິນມະຫາສະນິດ ແຕ່ບໍ່ເປັນເລື່ອງກ່ຽວກັບໜ້າເປື້ອນ ບັນຫາແຕ່ວ່າຜູ້ກ່ຽວສຳນຶກຕົວວ່າ ມີບາບຢູ່.




ກ. ທີ່ມີບາບຫຼາຍປານນັ້ນນາງຄວນຮັບສິນມະຫາສະນິດບໍ່? ____________________

ຂ. ສົມຄວນທີ່ຈະຂາດປະຊຸມບໍ່? ____________

ຄ. ຖ້າມີບາບ ຄວນເຮັດຫຍັງກັບ ບາບນັ້ນ?

______________________________

ງ. ຖິ້ມໃຈເກົ່າເອົາໃຈໃໝ່ແລ້ວຈະມີສິດ ຮ່ວມຮັບສິນໄດ້ບໍ່? ________________________

**33** ຄົນທີ່ເນັ້ນແຕ່ພະບັນຍັດແຕ່ບໍ່ຮັບຮູ້ເລື່ອງພະຄຸນຂອງພະເຈົ້າ ຄົນເຫຼົ່ານັ້ນອາດຈະຄິດຢ່າງຄົນໃນຮູບທີສອງນັ້ນຄືເຊື່ອ ວ່າບໍ່ມີສິດຮັບສິນມະຫາສະໜິດເພາະວ່າບໍ່ເຮັດຕາມພະບັນຍັດ. ຄົນທີ່ເຫັນແຕ່ພະບັນຍັດຢ່າງດຽວອາດຈະຖືວ່າມີສິດ ຮັບສິນຫຼືບໍ່ມີສິດແລ້ວແຕ່ເຂົາຈະເຮັດດີຫຼືບໍ່.

ກ. ອາທິດໃດທີ່ເຂົາເຮັດດີແລ້ວເຂົາຈະມີສິດຮັບຫຍັງ? ____________________

ຂ. ອາທິດໃດທີ່ເຂົາເຮັດບາບເຂົາຖືຢ່າງໃດ? ____________________

*ທີ່ຈິງສິດທີ່ຈະຮັບສິນມະຫາສະນິດນັ້ນບໍ່ໄດ້ຂຶ້ນຢູ່ກັບພະບັນຍັດ ແຕ່ຂຶ້ນຢູ່ກັບການຖິ້ມໃຈເກົ່າເອົາໃຈໃໝ່ແລະຄວາມ ເຊື່ອໃນພະເຢຊູ.*

**34** ໃນເນື້ອຄວາມຕ່າງໆ ດັ່ງຕໍ່ໄປນີ້ ໃຫ້ທ່ານໝາຍເອົາຄວາມໃດທີ່ສະແດງທ່າທີຂອງຄົນທີ່ເຫັນແຕ່ພະບັນຍັດ.

ກ. ຕະຫຼອດອາທິດແລ້ວນີ້ຂ້ອຍບໍ່ໃຈຮ້າຍຈັກເທື່ອດັ່ງນັ້ນຈຶ່ງມີສິດຮັບສິນ.

ຂ. ໃນຕົວຂ້ອຍເອງບໍ່ມີຄ່າທີ່ຈະຄືນດີກັບພະເຈົ້າແຕ່ຂ້ອຍກໍຍອມຮັບເພາະເປັນການສະແດງຄວາມຮັກຂອງພະອົງ.

ຄ. ຖ້າໄປປະຊຸມນະມັດສະການທຸກໆ ອາທິດ ພະເຈົ້າຈະພໍໃຈກັບຂ້ອຍ.

ງ. ແມ່ນຄວາມຈິງທີ່ຂ້ອຍຕົວະເປັນບາງເທື່ອແຕ່ຂ້ອຍບໍ່ນັບຖືພະເຈົ້າອົງອື່ນ ດັ່ງນັ້ນຄິດວ່າຂ້ອຍຖືພະບັນຍັດສໍາ ຄັນແລ້ວ.

ຈ. ພະເຢຊູຊ່ວຍໃຫ້ຂ້ອຍໄດ້ລອດຈາກບາບ. ດັ່ງນັ້ນຈຶ່ງຢາກຫາໂອກາດຊ່ວຍຄົນອື່ນ.

ສ. ເທື່ອໃດທີ່ຜິດພະບັນຍັດປະການໜຶ່ງຂ້ອຍພະຍາຍາມຖືອີກ 9 ປະການຢ່າງໝັ້ນຄົງ.

**35** ເຮົາຄວນຮັບສິນມະຫາສະນິດຢ່າງໃດ? (ຕື່ມຄວາມທີ່ຂາດ)

ກ. ຖິ້ມ ____________________ ກ່ອນ

ຂ. ໂດຍມີຄວາມ ____________________

ຄ. ແລະຢ່າເພິ່ງແຕ່ ____________________

**36** ໃຫ້ອ່ານ 1 ໂຢຮັນ 1:9. ຖ້າຄຣິດສະຕຽນຄົນໃດຈວນຈະຮັບສິນມະຫາສະນິດຈຶ່ງສັງເກດຕົນເອງວ່າຫຼົງເຮັດບາບແລ້ວຂໍໃຫ້ ພະເຈົ້າຍົກຜິດແລະຕັ້ງໃຈໃໝ່ຕໍ່ພະເຈົ້າເຊື່ອວ່າຖ້າເຮົາຮັບ ____________________ ໃນທັນ ທີທັນໃດນັ້ນພະອົງຈະຍົກບາບໃຫ້ແລ້ວຈຶ່ງຮັບສິນ ____________________ ໄດ້. (ຕື່ມຄວາມທີ່ຂາດ)

**37** ໃນສິນມະຫາສະນິດ

ກ. ທີ່ໃຊ້ການກິນທໍາມະດາສະແດງເຖິງຫຍັງ? ____________________

ຂ. ທີ່ຜູ້ແຕ່ງເອົາເຂົ້າຈີ່ຫັກແລະເອົານໍ້າອະງຸ່ນຖອກອອກໝາຍເຖິງຫຍັງ? ____________________

ຄ. ຄຣິດສະຕຽນທີ່ຮັບເຂົ້າຈີ່ແລະຈອກ ສະແດງວ່າເຂົາຮັບໃຜ? ____________________

ງ. ທີ່ຮັບຮ່ວມກັນ ສະແດງວ່າເຮົາຮ່ວມກັນເປັນຄອບຄົວໃຜ? ____________________

**38** ກ. ໃນສິນມະຫາສະນິດເຂົ້າຈີ່ປຽບທຽບຫຍັງ? ______________________________

ຂ. ນ້ຳອະງຸ່ນປຽບທຽບຫຍັງ? ______________________________

**39** ກ. ໃນສິນມະຫາສະນິດແມ່ນຜູ້ໃດຖະຫວາຍຕົວ? ______________________________

ຂ. ຖະຫວາຍເພື່ອໃຜ? ______________________________

**40** ໃຫ້ທ່ານອ່ານ ເຮັບເລີ 10:10 ພະເຢຊູຖະຫວາຍພະກາຍຈັກເທື່ອ? ________________

*ການຖະຫວາຍຕົວກໍເປັນການສິ້ນສຸດ!*

**41** ໃນໂຢຮັນ 19:30 ເມື່ອຈວນຈະຕາຍແລ້ວ ພະອົງກ່າວວ່າ "ສຳເລັດແລ້ວ" ໝາຍຄວາມວ່າຢ່າງໃດ? (ເລືອກ)

ກ. ເຮົາຕ້ອງເຮັດບຸນຢູ່ສະເໝີຈຶ່ງຈະໄດ້ລອດ

ຂ. ເຮົາຕ້ອງເຮັດຄືພະເຢຊູຕາຍຊ້ຳອີກທຸກອາທິດ.

ຄ. ການຖະຫວາຍຕົວຂອງພະເຢຊູສິ້ນສຸດໃນເວລານັ້ນ.

**42** ເທື່ອໃດທີ່ເຮົາຈະມາຮັບສິນມະຫາສະນິດ

ກ. ຈຶ່ງຖີ້ມຫຍັງກ່ອນ? ______________________________

ຂ. ໂດຍມີຫຍັງ? ______________________________

ຄ. ຢ່າເພິ່ງຫຍັງ? ______________________________

**43** ຖ້າຄຣິດສະຕຽນຄົນໃດຈະຮັບສິນມະຫາສະ ນິດ ຄວນສັງເກດຕົນເອງວ່າມີບາບທີ່ບໍ່ໄດ້ຮັບສາລະພາບຕໍ່ພະເຈົ້າເທື່ອສິມ ຄວນຈະເຮັດຫຍັງກ່ອນ? ______________________

*ຂອບໃຈພະເຈົ້າທີ່ພະເຢຊູຖະຫວາຍຊີວິດເທື່ອດຽວແລ້ວພວກເຮົາຈະໄດ້ລອດທາງຄວາມຕາຍຂອງພະອົງນັ້ນມາເຖິງປະຈຸບັນນີ້. ເທື່ອໃດທີ່ເຮົາມີໂອກາດຮັບສິນມະຫາສະນິດນັ້ນໃຫ້ເຮົາຮ່ວມຈິດຮ່ວມໃຈກັບພີ່ນ້ອງຄຣິດສະຕຽນໃນ ການລະນຶກເຖິງຄວາມຕາຍຂອງພະອົງເພື່ອເຮົາ.*



*ຈົ່ງເສັງບົດທີ 18!*

**ຄຳຕອບ:**

**1** *ກ. ປັດສະຄາ ຂ. ເຫດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ*
*ຄ. ທີ່ເຂົາຮັບການປົດປ່ອຍຈາກການເປັນທາດໃນເອຢິບ ງ. ຄວາມບາບ*

**2** *ກ. ເຂົ້າຈີ່ນັ້ນປຽບທຽບພະກາຍຂອງພະເຢຊູ ຂ. ຈອກນັ້ນປຽບທຽບເລືອດຂອງພະອົງ*

**3** *ຄ ຖືກ*

**4** *ເຂົ້າຈີ່... ນ້ຳອະງຸ່ນ*

**5** *ກ ຖືກ*

**6** *ຂ ຖືກ*

**7** *ລ້ຽງ*

**8** *ກ. ອາຫານທິບແຫ່ງຊີວິດ ຂ. ຈະບໍ່ຢາກເຂົ້າ*

**9** *ຈິດວິນຍານ*

**10** *ກ. ຫັກ (ຍື່ນໃຫ້ພວກສາວົກ) ຂ. ຄວາມຕາຍ*

**11** *ກ. ພະເຢຊູ ຂ. ໄມ້ກາງແຂນ*

**12** *ກ. ຖອກອອກ ຂ. ໄມ້ກາງແຂນ*

**13** *ຄວາມຕາຍ*

**14** *ກ. ວິນຍານ ຂ. ຄວາມຕາຍຂອງພະອົງ*

**15** *ກ. ຈຶ່ງຮັບກິນສາ ຂ. ຈຶ່ງດື່ມແຕ່ຈອກນີ້ທຸກຄືນ*

**16** *ທຸກຄືນ*

**17** *ພະເຢຊູ*

**18** *ຮັບພະເຢຊູເປັນພະຜູ້ຊ່ວຍເຮົາໃຫ້ລອດ (ຮັບພະເຢຊູດ້ານວິນຍານກໍໄດ້)*

**19** *ກ. ຈິດວິນຍານ ຂ. ພະເຢຊູຕາຍເພື່ອເຮົາ ຄ. ຮັບພະເຢຊູກ່ອນ*

**20** *ກ ຖືກ*

**21** *ຄ ຖືກ*

**22** *ກ. ກ້ອນດຽວ ຂ. ຫຼາຍ ຄ. ອັນດຽວ*

**23** *ພະເຈົ້າ*

**24** *ກ. ພະອົງລ້ຽງເຮົາດ້ານວິນຍານ ຊຶ່ງພິພາກສາ ຂ. ການ ຄ. ເຮົາຮັບພະເຢຊູແລ້ວ*
*ງ. ເຮົາເປັນຄອບຄົວດຽວໃນພະເຈົ້າ*

**25** *ກ. ໃຈຂອງຕົນເອງ ຂ. ພະເຢຊູຕາຍເພື່ອເຮົາ*

**26** *ຖິ້ມໃຈເກົ່າເອົາໃຈໃໝ່*

**27** *ຖິ້ມໃຈເກົ່າເອົາໃຈໃໝ່*

**28** *ຖິ້ມໃຈເກົ່າເອົາໃຈໃໝ່*

**29** *ກ. ຄວາມເຊື່ອ ຂ. ພະເຢຊູ*

**30** *ຈຶ່ງຖິ້ມໃຈເກົ່າເອົາໃຈໃໝ່ ຈຶ່ງມີຄວາມເຊື່ອໃນພະອົງ*

**ຄຳຕອບ (ຕໍ່):**

**31** *ກ. ບໍ່ຄວນ ຂ. ບໍ່ຈຳເປັນ ຄ. ລ້າງໜ້າ ງ. ໄດ້*

**32** *ກ. ບໍ່ຄວນ ຂ. ບໍ່ ຄ. ຖິ້ມໃຈເກົ່າເອົາໃຈໃໝ່ ງ. ໄດ້*

**33** *ກ. ຮັບສິນມະຫາສະນິດ ຂ. ຖືວ່າບໍ່ມີສິດ*

**34** *ກ ຄ ງ ສ ຖືກ*

**35** *ກ. ໃຈເກົ່າເອົາໃຈໃໝ່ ຂ. ເຊື່ອ ຄ. ພະບັນຍັດ*

**36** *ສາລະພາບຜິດບາບ... ມະຫາສະນິດ*

**37** *ກ. ພະອົງລ້ຽງເຮົາດ້ານວິນຍານ ຂ. ພະອົງຕາຍເພື່ອເຮົາ ຄ. ຮັບພະເຢຊູ ງ. ຂອງພະເຈົ້າ*

**38** *ກ. ພະກາຍຂອງພະເຢຊູ ຂ. ເລືອດຂອງພະເຢຊູ*

**39** *ກ. ພະເຢຊູຖະຫວາຍຕົວ ຂ. ເພື່ອເຮົາ*

**40** *ເທື່ອດຽວ*

**41** *ຄ ຖືກ*

**42** *ກ. ຖິ້ມໃຈເກົ່າເອົາໃຈໃໝ່ ຂ. ໂດຍມີຄວາມເຊື່ອ ຄ. ຢ່າເພິ່ງພະບັນຍັດ*

**43** *ຮັບສາລະພາບບາບນັ້ນ ແລ້ວຮັບສິນເລີຍ.*